ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

----===000===-----

ກະຊວງການເງິນ

ເລກທີ 1183/ກງ.

ນະຄອນຫລວງວຽງຈັນ, ວັນທີ 21 MAY 2008

# ຂໍ້ຕົກລົງ

ຂອງລັດຖະມົນຕີວ່າການກະຊວງການເງິນ

ກ່ຽວກັບການຄຸ້ມຄອງລາຍຮັບ-ລາຍຈ່າຍຂອງກອງຄຸ້ມຄອງການຈະລາຈອນທາງອາກາດ

- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກະຊວງການເງິນ ສະບັບ ເລກທີ 80/ນຍ, ລົງວັນທີ 28 ກຸມພາ 2007;
- ອີງຕາມ ແຈ້ງການຂອງສຳນັກງານນາຍົກລັດຖະມົນຕີ ກ່ຽວກັບການປັບປຸງການຄຸ້ມຄອງ ການບິນ ສະບັບເລກທີ 1444/ສນຍ, ລົງວັນທີ 02 ຕຸລາ 2002.
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີວ່າການກະຊວງຄົມມະນາຄົມ ຂົນສົ່ງ ໄປສະນີ ແລະກໍ່ສ້າງ ກ່ຽວກັບການຈັດຕັ້ງ ແລະ ການເຄື່ອນໄຫວຂອງກອງຄຸ້ມຄອງການຈະລາຈອນທາງອາກາດ ສະບັບ ເລກທີ 9966/ຄຂປກ, ລົງວັນທີ 28 ກໍລະກົດ 2004.

## ລັດຖະມົນຕີວ່າການອອກຂໍ້ຕົກລົງ:

## ໝວດທີ 1

## ຂໍ້ກຳນົດທົ່ວໄປ ແລະ ນິຍາມ

### ມາດຕາ 1. ຈຸດປະສົງ

ຂໍ້ຕົກລົງສະບັບນີ້ວາງອອກ ເພື່ອກຳນົດຫຼັກການ ແລະລະບຽບການພື້ນຖານ ກ່ຽວກັບການສ້າງແຜນ, ການຈັດຕັ້ງປະຕິບັດ, ການສະຫຼຸບ ແລະການຕິດຕາມກວດກາ ລາຍຮັບ, ລາຍຈ່າຍ ງົບປະມານ ຂອງກອງຄຸ້ມຄອງການຈະລາຈອນທາງອາກາດ ເພື່ອຄຸ້ມຄອງການປະຕິບັດລາຍຈ່າຍໃຫ້ມີຄວາມໂປ່ງໃສ , ປະຢັດມັດທະຍັດ ແລະ ນຳໃຊ້ທຶນລັດຢ່າງມີປະສິດທິຜົນສູງ. ແນໃສ່ ການປະຕິບັດວຽກງານວິຊາສະເພາະຢ່າງຄ່ອງຕົວ, ສະໜອງການບໍລິການຮັບໃຊ້ສັງຄົມໃຫ້ວ່ອງໄວ, ຂຸດຄົ້ນແຫຼ່ງລາຍຮັບ ເພື່ອປະກອບສ່ວນ ພັດທະນາວຽກງານການບິນ ກໍ່ຄືການພັດທະນາ ເສດຖະກິດ-ສັງຄົມ ຂອງຊາດ.

## ມາດຕາ 2. ນິຍາມຄວາມໝາຍຂອງກອງບໍລິຫານວິຊາການ

ກອງຄຸ້ມຄອງການຈະລາຈອນທາງອາກາດ ເປັນອົງການບໍລິຫານວິຊາການ ທີ່ນຳໃຊ້ຊັບສິນ ແລະງົບປະມານທີ່ລັດປະກອບໃຫ້ເພື່ອບໍລິການຮັບໃຊ້ສັງຄົມ. ກອງຄຸ້ມຄອງການຈະລາຈອນທາງອາກາດ ເປັນຫົວໜ່ວຍງົບປະມານຂັ້ນສອງ ຂອງກະຊວງໂຍທາທິການ ແລະຂົນສົ່ງ.

## ມາດຕາ 3. ງົບປະມານ

ງົບປະມານຂອງກອງຄຸ້ມຄອງການຈະລາຈອນທາງອາກາດຕ້ອງມີການຄິດໄລ່, ໄລ່ລຽງລາຍຮັບ, ລາຍຈ່າຍ ສັງລວມເຂົ້າໃນແຜນງົບປະມານປະຈຳສົກປີ ຂອງກະຊວງໂຍທາທິການ ແລະຂົນສົ່ງ, ປະຕິບັດຕາມລະບຽບການເງິນແຫ່ງລັດ ແລະພາຍໃຕ້ການຄຸ້ມຄອງຂອງຂະແໜງກ່ຽວຂ້ອງ ແລະຂະແໜງການເງິນ.

ລາຍຮັບ ແລະລາຍຈ່າຍຂອງກອງຄຸ້ມຄອງການຈະລາຈອນທາງອາກາດ ຕ້ອງໄດ້ມີການຄິດໄລ່, ໄລ່ລຽງລາຍຮັບ ແລະລາຍຈ່າຍ. ໃນກໍລະນີທີ່ລາຍຮັບຫາກບໍ່ພຽງພໍກັບລາຍຈ່າຍ ລັດຈະເປັນຜູ້ຊ່ວຍໜູນໃຫ້, ຖ້າຫາກລາຍຮັບຫລາຍກ່ວາລາຍຈ່າຍ ຕ້ອງໄດ້ມອບຄືນເຂົ້າງົບປະມານແຫ່ງລັດ.

# ໝວດທີ 2
# ລາຍຮັບ ແລະ ລາຍຈ່າຍ ໃນການຄຸ້ມຄອງ

## ມາດຕາ 4. ລາຍຮັບ

ລາຍຮັບຕົ້ນຕໍຂອງກອງຄຸ້ມຄອງການຈະລາຈອນທາງອາກາດໄດ້ມາຈາກ:

1. ຄ່າບໍລິການບິນຜ່ານ
2. ການບໍລິການວິທະຍຸຊ່ວຍການບິນ
3. ການບໍລິການອື່ນໆ
4. ເງິນຊ່ວຍເຫຼືອ ແລະ ເງິນຊ່ວຍໜູນ ຈາກງົບປະມານແຫ່ງລັດ

## ມາດຕາ 5. ລາຍຈ່າຍ

ລາຍຈ່າຍ ຕົ້ນຕໍຂອງກອງຄຸ້ມຄອງການຈະລາຈອນທາງອາກາດໄດ້ມາຈາກ:

1. ລາຍຈ່າຍ ຄັງເງິນເດືອນ, ເງິນອຸດໜູນ ແລະ ເງິນນະໂຍບາຍເບັຍລ້ຽງຕ່າງໆ;
2. ລາຍຈ່າຍ ຮັບໃຊ້ກິຈັກບໍລິຫານວິຊາການ ( ຫຼືບໍລິຫານປົກກະຕິ );
3. ລາຍຈ່າຍຮັບໃຊ້ວິຊາການ.
4. ລາຍຈ່າຍ ດອກເບ້ຍ ແລະ ເງິນຄ້ຳປະກັນ.
5. ລາຍຈ່າຍບັງເອີນອື່ນໆ
6. ລາຍຈ່າຍໃນການລົງທຶນ ( ຂະໜາດນ້ອຍ )

### ມາດຕາ 6. ການຄຸ້ມຄອງລາຍຮັບ-ລາຍຈ່າຍ

ກອງຄຸ້ມຄອງຈະລາຈອນທາງອາກາດ ຕ້ອງມອບລາຍຮັບທີ່ກຳນົດໄວ້ໃນມາດຕາ 4 ເຂົ້າບັນຊີເງິນຝາກຢູ່ຄັງເງິນແຫ່ງຊາດ ເປັນແຕ່ລະເດືອນ ຊ້າສຸດບໍ່ໃຫ້ກາຍວັນທີສິບຫ້າຂອງເດືອນຖັດໄປ.

ໃນກໍລະນີ ທີ່ເກັບລາຍຮັບວິຊາການໄດ້ເກີນແຜນທີ່ສະພາແຫ່ງຊາດໄດ້ຮັບຮອງເອົາແລ້ວ, ສ່ວນທີ່ປະຕິບັດໄດ້ລື່ນແຜນການນັ້ນແມ່ນ ໃຫ້ປະຕິບັດຕາມລະບຽບການຂອງກະຊວງການເງິນໃນແຕ່ລະປີ.

## ໝວດທີ 3
## ການສ້າງ ແລະ ການຮັບຮອງ ແຜນການງົບປະມານປະຈຳປີ

### ມາດຕາ 7 . ການສ້າງແຜນການງົບປະມານປະຈຳປີ

ກອງຄຸ້ມຄອງການຈະລາຈອນທາງອາກາດ ສ້າງແຜນການງົບປະມານປະຈຳປີ ດັ່ງນີ້:

1. ແຜນລາຍຮັບສ້າງຂຶ້ນບົນພື້ນຖານການຄາດຄະເນຕົວເລກປະລິມານ ການບໍລິການທີ່ເຮືອບິນໆຜ່ານ, ນຳໃຊ້ວິທະຍຸຊ່ວຍການບິນ; ຕາມສັນຍາ ແລະ ຂໍ້ມູນຕົວຈິງ ຂອງລາຍຮັບປະເພດການຄ້າ ການບໍລິການ.

2. ແຜນການລາຍຈ່າຍງົບປະມານປະຈຳປີສ້າງຂຶ້ນບົນພື້ນຖານຄວາມອາດສາມາດຂອງລາຍຮັບ ແລະ ຮັບປະກັນດ້ານລາຍຈ່າຍໃນການຄຸ້ມຄອງ ແລະ ການບໍລິການຈະລາຈອນທາງອາກາດ ເພື່ອຮັບປະກັນຄວາມປອດໄພ ແລະ ສ້າງລາຍຮັບໃຫ້ງົບປະມານແຫ່ງລັດ. ສ່ວນລາຍຈ່າຍເພື່ອການລົງທຶນແມ່ນນອນຢູ່ໃນແຜນການລົງທຶນຂອງງົບປະມານແຫ່ງລັດ ( ອີງຕາມບົດວິພາກເສດຖະກິດ ໃນການທັນກອງ, ການລົງທຶນຂະໜາດໃຫຍ່ ແມ່ນມອບໃຫ້ກົມການບິນພົນລະເຮືອນ ເປັນຜູ້ຈັດຕັ້ງປະຕິບັດ ).

### ມາດຕາ 8. ການຮັບຮອງແຜນການງົບປະມານປະຈຳປີ

ກະຊວງໂຍທາທິການ ແລະຂົນສົ່ງ ເປັນຜູ້ຕົກລົງຮັບຮອງເອົາແຜນການງົບປະມານ ລາຍຮັບ-ລາຍຈ່າຍ ປະຈຳປີ ຂອງກອງຄຸ້ມຄອງການຈະລາຈອນທາງອາກາດ ແລ້ວນຳສະເໜີຕໍ່ສະພາແຫ່ງຊາດ ໂດຍຜ່ານກະຊວງການເງິນ.

## ໝວດທີ 4
## ການຈັດຕັ້ງປະຕິບັດງົບປະມານ

### ມາດຕາ 9. ຜູ້ສັ່ງການ ແລະ ນາຍບັນຊີ

1. ຜູ້ສັ່ງການ ແມ່ນ ລັດຖະມົນຕີວ່າການກະຊວງໂຍທາທິການ ແລະຂົນສົ່ງ ແລະ ມີສິດມອບສິດໃຫ້ ຫົວໜ້າກອງຄຸ້ມຄອງການຈະລາຈອນທາງອາກາດ, ຫົວໜ້າຫ້ອງການຄຸ້ມຄອງການ

ຈະລາຈອນທາງອາກາດ ປະຈຳແຂວງ ເປັນຜູ້ສັ່ງການລາຍຮັບ, ລາຍຈ່າຍ ແທນຕາມຂອບເຂດສິດ ແລະ ໜ້າທີ່ຂອງຕົນ.

2. ຫົວໜ້າຫ້ອງການບັນຊີ, ຫົວໜ້າໜ່ວຍງານບັນຊີ ຂອງຫ້ອງການຄຸ້ມຄອງການຈະລາຈອນທາງອາກາດ ປະຈຳແຂວງ ໃຫ້ເປັນນາຍບັນຊີ.

## ມາດຕາ 10. ການໄລ່ລຽງ ລາຍຮັບ-ລາຍຈ່າຍ

ຜູ້ສັ່ງການ ເປັນຜູ້ຮັບຜິດຊອບໃນການໄລ່ລຽງ ແລະອອກຄຳສັ່ງມອບລາຍຮັບ, ເຊັນຂໍ້ຜູກພັນຈ່າຍ, ຢັ້ງຢືນການໃຊ້ຈ່າຍ ແລະ ອອກຄຳສັ່ງຈ່າຍ. ນາຍບັນຊີມີສິດເກັບລາຍຮັບ, ເຊັນຂໍ້ຜູກພັນ, ຢັ້ງຢືນການຈ່າຍ ແລະ ອອກຄຳສັ່ງຈ່າຍ. ນາຍບັນຊີມີສິດເກັບລາຍຮັບ ແລະ ມີສິດຊຳລະເງິນຕົວຈິງບົນພື້ນຖານຄຳສັ່ງມອບ ແລະ ຄຳສັ່ງຈ່າຍ ຂອງຜູ້ສັ່ງການ.

## ມາດຕາ 11. ການຄຸ້ມຄອງຄັງເງິນ ແລະ ການບັນຊີ

ການຄຸ້ມຄອງການຈະລາຈອນທາງອາກາດ ຖືບັນຊີງົບປະມານແຫ່ງລັດ, ມີບັນຊີເງິນຝາກຢູ່ໃນລະບົບຄັງເງິນແຫ່ງຊາດ. ກອງຄຸ້ມຄອງຈະລາຈອນທາງອາກາດ ສາມາດຈ່າຍເງິນລ່ວງໜ້າໃນບັນຊີເງິນຝາກນີ້ໄດ້ໃນກໍລະນີມີຄວາມຈຳເປັນ, ຫຼັງຈາກນັ້ນ ຈຶ່ງສ້າງໃບຂໍຖອນງົບປະມານມາປິດກັບການຈ່າຍລ່ວງໜ້າດັ່ງກ່າວນີ້.

## ມາດຕາ 12. ພັນທະຂອງການຄຸ້ມຄອງການຈະລາຈອນທາງອາກາດ

ກອງຄຸ້ມຄອງການຈະລາຈອນທາງອາກາດເປັນຜູ້ຕິດຕາມ, ຮຽກເກັບ, ໄລ່ລຽງແລະມອບລາຍຮັບເຂົ້າງົບປະມານຢ່າງເປັນປົກກະຕິ.

## ມາດຕາ 13. ລະບອບການລາຍງານ

ການຄຸ້ມຄອງການຈະລາຈອນທາງອາກາດ ຈະຕ້ອງລາຍງານສະພາບວຽກງານປະຈຳເດືອນ, 3 ເດືອນ, 6 ເດືອນ ແລະ 12 ເດືອນ ໃຫ້ຂັ້ນເທິງຂອງຕົນຢ່າງເປັນປົກກະຕິ.

## ໝວດທີ 5
## ບົດບັນຍັດສຸດທ້າຍ

ມາດຕາ 14. ການຈັດຕັ້ງປະຕິບັດ

ກອງຄຸ້ມຄອງການຈະລາຈອນທາງອາກາດ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ. ໃນການຈັດຕັ້ງປະຕິບັດຕົວຈິງ ຂໍ້ຕົກລົງສະບັບນີ້ສາມາດປັບປຸງໃຫ້ສອດຄ່ອງກັບລະດັບການຂະຫຍາຍຕົວ ຂອງເສດຖະກິດ-ສັງຄົມ ໃນແຕ່ລະໄລຍະ.

**ມາດຕາ 15. ຜົນບັງຄັບໃຊ້**

ຂໍ້ຕົກລົງສະບັບນີ້ ປ່ຽນແທນຂໍ້ຕົກລົງຂອງລັດຖະມົນຕີວ່າການກະຊວງການເງິນ ເລກທີ່ 2750/ກງ, ລົງວັນທີ 21 ພະຈິກ 2007; ມີຜົນບັງຄັບໃຊ້ໄດ້ ແລະເລີ່ມຈັດຕັ້ງປະຕິບັດ ໃນວັນທີ 01 ເດືອນຕຸລາ ປີ 2007 ເປັນຕົ້ນໄປ. ຂໍ້ຕົກລົງ ແລະລະບຽບການໃດ ທີ່ຂັດກັບຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກລົບລ້າງ.

**ລັດຖະມົນຕີວ່າການກະຊວງການເງິນ,**



ສົມດີ ດວງດີ